# ຊຸດອຸປະກອນ
# ປ້ອງກັນຕົນເອງ
## ແບບຄົບຊຸດ



Wild Health Net

WCS

## ຫຼັກການປະຕິບັດ ການເກັບຊາກສັດປ່າ




ປີ້ນຖົງຢາງດ້ານໃນກວມເອົາມືຂອງທ່ານ.




ຈາກນັ້ນ, ໄປຈັບເອົາຊາກສັດປ່າ ແລ້ວ ປີ້ນຖົງຢາງກັບຄືນກວມເອົາຊາກສັດປ່າ.




ມ້ວນຖົງຊາກສັດປ່າ ເພື່ອໄລ່ອາກາດອອກ ໃຫ້ໝົດ ປິດປາກຖົງ ຫຼື ມັດປາກຖົງໃຫ້ແໜ້ນ ດ້ວຍເຊືອກໂດຍໃຫ້ຫ່າງຈາກໂຕທ່ານ.




ເອົາຊາກສັດປ່າທີ່ບັນຈຸຢູ່ໃນຖົງຢາງ ໃສ່ໃນຖົງຢາງຊັ້ນທີ2;
ມ້ວນໄລ່ອາກາດອອກ ປິດປາກຖົງໃຫ້ແໜ້ນ.







ເອົາຊາກສັດປ່າທີ່ບັນຈຸຢູ່ໃນຖົງຢາງ 2 ຊັ້ນໃສ່ໃນຖົງຢາງຊັ້ນທີ 3, ພ້ອມເອົາ "ແບບພິມ ບັນທຶກເຫດການສັດປ່າເຈັບ ຫຼື ຕາຍ ແລະ ແບບພິມບັນທຶກ ການເກັບຕົວຢ່າງສັດປ່າ" ທີ່ຕື່ມຂໍ້ມູນຄົບຖ້ວນແລ້ວ; ໃສ່ໃນຖົງຊາກສັດປ່າຊັ້ນທີ 3, ມ້ວນຖົງໄລ່ອາກາດອອກ, ອັດປາກຖົງ.

## ຫຼັກການຫຸ້ມຫໍ່ຕົວຢ່າງ ແລະ ຊາກສັດປ່າ ເພື່ອຈັດສົ່ງຫ້ອງວິໄຈ




ປູຖົງຢາງທີ່ໜາ ( ຫຼື ຖົງຢາງດຳໃສ່ຂີ້ເຫຍື້ອ ) ລົງໃນກ່ອງໂຟມ.




ເອົາຜ້າ ຫຼື ວັດຖຸທີ່ສາມາດດູດຊັບຂອງແຫຼວ ໃສ່ໃນຖົງຢາງເພື່ອດູດຊັບນ້ຳຫຼືທາດແຫຼວ ທີ່ອາດຈະໄຫຼອອກມາ ໃນຂະນະຂົນສົ່ງ.







ຈາກນັ້ນ, ນຳຊາກສັດປ່າ ຫຼື ຕົວຢ່າງທີ່ຖືກບັນຈຸຢູ່ໃນຖົງທີ່ປິດປາກຢ່າງດີຈຳນວນສາມຊັ້ນ ວາງລົງໃນຖົງຢາງ ພ້ອມກັບຖົງ ຫຼື ຕຸກນ້ຳກ້ອນທີ່ມີຝາປິດຢ່າງດີ (ຕ້ອງໝັ້ນໃຈວ່າການ ລະລາຍຂອງນ້ຳກ້ອນ ຈະບໍ່ສາມາດຊຶມເຂົ້າຖົງຊາກສັດປ່າໄດ້).




ອັດປາກຖົງຢາງ ແລະ ມັດດ້ວຍເຊືອກ ໃຫ້ແໜ້ນ.




ປິດຝາກ່ອງໂຟມແລະຕິດທັບປາກຝາ ແລະ ກ້ຽວອ້ອມກ່ອງໂຟມດ້ວຍສະກ໋ອດ ແຜ່ນໃຫຍ່.

ຕິດປ້າຍສັນຍາລັກ UN3373 ໃສ່ກ່ອງໂຟມ; ຕິດລາຍລະອຽດຊື່ຜູ້ສົ່ງ-ຜູ້ຮັບ, ສະຖານທີ່ ແລະ ເບີໂທຕິດຕໍ່.

# ການສວມໃສ່ຊຸດອຸປະກອນປ້ອງກັນຕົນເອງແບບຄົບຊຸດ

ຊອກຫາສະຖານທີ່ສະອາດ ແລະ ປອດໄພ ໃນການສວມໃສ່ຊຸດອຸປະກອນປ້ອງກັນຕົນເອງ, ໂດຍໃຫ້ຫ່າງຈາກຈຸດສັດປ່າເຈັບ ປ່ວຍ ຫຼື ຕາຍ ອຸປະກອນປ້ອງກັນຕົນເອງແບບຄົບຊຸດ ທີ່ພະນັກງານສັດຕະວະແພດ/ລ້ຽງສັດ ຫຼື ທີມງານສຸຂະພາບສັດປ່າ ຕ້ອງສວມໃສ່ ໃນຂະນະທີ່ທຳການເກັບຕົວຢ່າງ, ຜ່າຊາກສັດ ຫຼື ລົງສືບຄົ້ນເຫດການ ທີ່ອາດມີຄວາມສ່ຽງສູງດ້ານຄວາມປອດໄພທາງຊີວະພາບ ປະກອບມີ:




# ຂັ້ນຕອນຂອງການຖອດຊຸດປ້ອງກັນຕົນເອງ ແບບຄົບຊຸດ

ໃຫ້ຄຳນຶງວ່າທຸກອຸປະກອນທີ່ທ່ານສວມໃສ່ ພາຍຫຼັງມີການສຳຜັດກັບສັດ ດ້ານນອກອາດປົນເປື້ອນດ້ວຍເຊື້ອພະຍາດ. ໃຫ້ກຳນົດເອົາສະຖານທີ່ສະເພາະໃດໜຶ່ງທີ່ຫ່າງໄກຈາກຊາກສັດ ເພື່ອຖອດຊຸດອຸປະກອນປ້ອງກັນຕົນເອງ, ທຸກຄົນຄວນໄປຖອດຢູ່ສະຖານທີ່ດຽວກັນ ແລະ ຕ້ອງຖອດແຕ່ລະອຸປະກອນ ຢ່າງລະມັດລະວັງ ຕາມລຳດັບດັ່ງລຸ່ມນີ້:

1. ລ້າງຂ້າເຊື້ອຖົງມືຊັ້ນນອກດ້ວຍເຈວລ້າງມືທີ່ມີທາດເຫຼົ້າຢ່າງຕ່ຳ60%.



2. ຖອດຜ້າຢາງກັນເປື້ອນ ແລ້ວຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ.



3. ຖອດຖົງຫຸ້ມເກີບ, ຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ. ຖ້າທ່ານໃສ່ເກີບໂບກຢາງ, ໃຫ້ລ້າງທຳຄວາມສະອາດຂ້າເຊື້ອ ດ້ວຍນ້ຳຢາຂ້າເຊື້ອ.



4. ຖອດຖົງມືຊັ້ນນອກອອກ, ຖິ້ມລົງຖົງຂີ້ເຫຍື້ອອັນຕະລາຍ.



5. ຖອດຊຸດປົກຄຸມໂຕ, ໂດຍການມ້ວນຈາກດ້ານໃນໄລ່ລົງລຸ່ມ,ແລ້ວຖິ້ມໃສ່ຖົງຂີ້ເຫຍື້ອອັນຕະລາຍ.



6. ຖອດແວ່ນຕາປ້ອງກັນ ຫຼື ແຜ່ນຢາງປ້ອງກັນໃບໜ້າ

   ລ້າງທຳຄວາມສະອາດແວ່ນຕາ ດ້ວຍນ້ຳຢາຂ້າເຊື້ອ ແລະ ສາມາດນຳກັບມາໃຊ້ຄືນໃໝ່.



7. ຖອດຜ້າອັດປາກ-ດັງ ໂດຍລະວັງບໍ່ໃຫ້ໄປຖືກພາກສ່ວນໃດຂອງຫົວທ່ານ, ຖິ້ມລົງຖົງຂີ້ເຫຍື້ອອັນຕະລາຍ.



8. ຖອດຖົງມືຊັ້ນໃນ, ຖິ້ມລົງຖົງຂີ້ເຫຍື້ອອັນຕະລາຍ.



9. ປິດປາກຖົງຂີ້ເຫຍື້ອອັນຕະລາຍ.



10. ລ້າງມືດ້ວຍສະບູ (ຖ້າມີ) ຫຼື ເຈວລ້າງມືທີ່ມີທາດເຫຼົ້າຢ່າງຕ່ຳ60%.

